ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---=== 000 ===---

ນາຍົກລັດຖະມົນຕີ

ເລກທີ 120 /ນຍ.

ວຽງຈັນ, ວັນທີ 14.07.2003

# ດຳລັດ

## ວ່າດ້ວຍການປະກາດໃຊ້ ສາລະບານອັດຕາພາສີ ລະບົບເອກະພາບອາຊຽນ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ.
- ອີງຕາມມະຕິຂອງກອງປະຊຸມລັດຖະບານ ຄັ້ງວັນທີ 1-3/7/2003.
- ເຫັນຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 1161/ກງ, ລົງວັນທີ 4/7/2003.

## ນາຍົກລັດຖະມົນຕີ ອອກດຳລັດ :

**ມາດຕາ 1 :** ລົບລ້າງ ສາລະບານ ອັດຕາພາສີຂາເຂົ້າ ທີ່ປະກາດໃຊ້ ໂດຍດຳລັດເລກທີ 12/ນຍ, ລົງວັນທີ 03 ກຸມພາ 1995 ວ່າດ້ວຍການປະກາດໃຊ້ ສາລະບານສິນຄ້າ ລະບົບເອກະພາບ ແລະ ອັດຕາພາສີຂາເຂົ້າ.

**ມາດຕາ 2 :** ປະກາດໃຊ້ ສາລະບານ ອັດຕາພາສີລະບົບເອກະພາບອາຊຽນ AHTN (ASEAN HARMONIZED TARIFF NOMENCLATURE) ຕາມປຶ້ມສາລະບານອັດຕາພາສີ ລະບົບເອກະພາບອາຊຽນ ທີ່ໄດ້ຄັດຕິດມາພ້ອມນີ້ ເພື່ອປ່ຽນແທນສາລະບານອັດຕາພາສີ ຂາເຂົ້າ ທີ່ຖືກລົບລ້າງຕາມເນື້ອໃນຂອງມາດຕາ 1 ຂ້າງເທິງນີ້.

**ມາດຕາ 3 :** ປຶ້ມສາລະບານອັດຕາພາສີ ລະບົບເອກະພາບອາຊຽນ ປະກອບດ້ວຍ 21 ພາກ ແລະ 97 ໝວດ (ສ່ວນໝວດທີ່ 77 ບໍ່ໄດ້ນຳໃຊ້); ຊຶ່ງໃນນີ້ມີ :

- ການຈຳແນກປະເພດ ໂດຍລະຫັດເຄົ້າ 4 ຕົວເລກ, 6 ຕົວເລກ ແລະ ລະຫັດຍ່ອຍ 8 ຕົວເລກ ເປັນຕົວກຳນົດອັດຕາພາສີ.
- ມີລາຍການສິນຄ້າທັງໝົດ 10.689 ລາຍການ.
- ລຸ້ນທີ່ນຳໃຊ້ ແມ່ນລະບົບເອກະພາບ 2002 (HS 2002).

ມາດຕາ 4 : ມອບໃຫ້ກະຊວງການເງິນ ເຮັດບົດແນະນຳລະອຽດ ກ່ຽວກັບການຕີຄວາມໝາຍສິນຄ້າ ເພື່ອນຳໄປຈັດຕັ້ງປະຕິບັດໃຫ້ເປັນເອກະພາບກັນໃນທົ່ວປະເທດ.

ມາດຕາ 5 : ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ